# ໂຮງຮຽນວັນອາທິດ

## ວັນອາທິດທີ 27 ພຶສຈິກາ 2016 (11- 27- 2016)

---

# ເຖິງຢ່າງໃດກໍຂອບພຣະຄຸນ

ໃນທາງໃດທີ່ທ່ານມັກສະແດງອອກໃນການຂອບພຣະຄຸນ?

**ຈຸດສຳຄັນຂອງບົດຮຽນ**: ພວກເຮົາສາມາດຂອບພຣະຄຸນພຣະເຈົ້າໄດ້ໃນທຸກໆສະຖານະການ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ໃນບາງມື້ກໍເປັນການຍາກທີ່ຈະອ່ານຂ່າວຫຼືເບິ່ງຂ່າວ.

- ລະເບີດຜູ້ກໍ່ການຮ້າຍໄດ້ສັງຫານ 20 ຊີວິດ ແລະບາດເຈັບອີກຈຳນວນຫລາຍໂຫລ.
- ບໍຣິສັດຢຸດຈ້າງຄົນງານຫລາຍພັນຄົນ, ໂດຍແຈ້ງວ່າຜລິດຜົນທັງໝົດຈະຢູ່ໃນຕ່າງປະເທດ.
- ອຸປະຕິເຫດຣົດຕຳກັນຫລາຍຄັນ ໄດ້ປິດຖນົນເປັນເວລາເຖິງຫົກຊົ່ວໂມງ.

ເພາະດ້ວຍຄວາມຈິງເຫຼົ່ານີ້ເອງ, ຈຶ່ງເປັນຄວາມຫຍຸ້ງຍາກໃນການສື່ສັມພັນຕໍ່ຄຳສັ່ງຂອງໂປໂລສຳລັບພວກເຮົາໃນການ "ຂອບພຣະຄຸນໃນທຸກສິ່ງ" (1 ເທຊະໂລນິກ 5: 18).

ຂອບພຣະຄຸນ "ໃນທຸກໆ ສິ່ງ" ແມ່ນບໍ? ເປັນໄປໄດ້ບໍເມື່ອຫລາຍສິ່ງທີ່ບໍ່ດີເກີດຂຶ້ນ ທັງຢູ່ຮອບໂລກແລະໃນຊີວິດຂອງເຮົາ? ຂອບພຣະຄຸນສເມີ, ຄຳຕອບນັ້ນກໍຄື ແມ່ນແລ້ວ, ແລະພຣະຄັມພີກໍບອກເຮົາວ່າຈະຂອບພຣະຄຸນຢ່າງໃດ.

ໃນລະຫວ່າງການປົກຄອງຂອງກະສັດເຢໂຮຊາຟັດໃນຢູດາ, ຄັ້ງນຶ່ງປະຊາກອນຂອງພຣະເຈົ້າໄດ້ປະເຊີນກັບບັນຫາຄວາມຫຍຸ້ງຍາກ. ເຖິງປານນັ້ນເຂົາເຈົ້າຍັງພົບທາງທີ່ຈະຂອບພຣະຄຸນພຣະເຈົ້າ ແລະດັ່ງນັ້ນພວກເຮົາສາມາດເຮັດໄດ້ຄືກັນ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

<u>**ສຶກສາພຣະຄັມພີ**</u>

### 1. <u>2 ຂ່າວຄາວ 20:10-12</u>:

*[10]ເບິ່ງແມ ບັດນີ້ຄົນອຳໂມນ ແລະໂມອາບ ແລະພູເຂົາເສອີ ຜູ້ຊຶ່ງພຣະອົງບໍ່ຊົງຍອມໃຫ້ຄົນອິສຣາເອນບຸກລຸກ ຕອນທີ່*
*ພວກເຂົາອອກມາຈາກແຜ່ນດິນເອຢິບ ແລະຜູ້ຊຶ່ງພວກເຂົາໄດ້ຫລີກໄປບໍ່ໄດ້ທຳລາຍເສັຽ [11]ເບິ່ງແມ ພວກເຂົາໄດ້ໃຫ້*
*ບຳເໜັດແກ່ເຮົາຢ່າງໃດ ດ້ວຍການມາຂັບໄລ່ເຮົາອອກເສັຽຈາກແຜ່ນດິນກັມມະສິດຂອງພຣະອົງ ທີ່ພຣະອົງປະທານ*
*ໃຫ້ແກ່ຂ້າພຣະອົງທັງຫລາຍເປັນມໍຣະດົກ [12]ຂ້າແດ່ພຣະເຈົ້າຂອງຂ້າພຣະອົງທັງຫລາຍ ພຣະອົງຈະບໍ່ຊົງກະທຳການ*
*ພິພາກສາເໜືອພວກເຂົາຫລື ເພາະວ່າຂ້າພຣະອົງທັງຫລາຍບໍ່ມີຣິດທີ່ຈະຕໍ່ສູ້ຄົນໝູ່ໃຫຍ່ນີ້ ຊຶ່ງກຳລັງມາຕໍ່ສູ້ກັບຂ້າພຣະ*
*ອົງ ຂ້າພຣະອົງບໍ່ຮູ້ວ່າຈະເຮັດປະການໃດ ແຕ່ດວງຕາຂອງຂ້າພຣະອົງທັງຫລາຍເບິ່ງທີ່ພຣະອົງ".*

ເຢໂຮຊາຟັດບໍ່ມີຊື່ຢູ່ໃນຄອບຄົວຂອງຄົນສມັຍໃໝ່ ບໍ່ເໝືອນກັບບຸກຄົນທີ່ມີຊື່ສຽງໃນພຣະຄັມພີເຊັ່ນ ດາວິດແລະໂມເຊ. ເຖິງປານນັ້ນເພິ່ນກໍເປັນບຸກຄົນສຳຄັນຢ່າງບໍ່ຕ້ອງສົງສັຍໃນປະວັດສາດ. ອີກຢ່າງນຶ່ງ ເພິ່ນກໍເປັນກະສັດ. ສິ່ງທີ່

ສຳຄັນກວ່ານັ້ນແມ່ນ, ເພິ່ນສແວງຫານ້ຳພຣະທັຍພຣະເຈົ້າໃນທຸກສິ່ງທີ່ເພິ່ນເຮັດ ( 2 ຂ່າວຄາວ 17: 3-4).

- ເພິ່ນຊອກຫາທາງໃຫ້ຄົນໃນປະເທດຫັນກັບມານະມັສການພຣະຢາເວ ( 1 ກະສັດ 22:46, 2 ຂ່າວຄາວ 17: 6; 19: 3)
- ເພິ່ນສົ່ງຄົນເລວີແລະປະໂຣຫິດໄປທົ່ວເມືອງຢູດາຍ, ເພື່ອສິດສອນປະຊາຊົນຈາກ "ໜັງສືພຣະບັນຍັດຂອງອົງພຣະຜູ້ເປັນເຈົ້າ ( 2 ຂ່າວຄາວ 17: 7- 9).
- ເພິ່ນປະຕິຮູບກ່ຽວກັບຣະບົບສານໃໝ່, ການຕັດສິນຄະດີຢ່າງຖືກຕ້ອງແລະຍຸດຕິທັມໃນການປົກຄອງ. ຈື່ໄວ້ໃນໃຈຂອງເຂົາວ່າ " ບໍ່ໄດ້ພິພາກສາເພື່ອມະນຸດແຕ່ເພື່ອອົງພຣະຜູ້ເປັນເຈົ້າ" ( 2 ຂ່າວຄາວ 19: 4- 11 ).

ເຖິງຈະເປັນບາດກ້າວທີ່ດີ, ເຢໂຮຊາຟັດຍັງຄົງປະເຊີນກັບການຕໍ່ສູ້ຈາກສັດຕຣູ. ແທ້ຈິງແລ້ວ, ເພື່ອນບ້ານຂອງເຢໂຮຊາຟັດ ຄືຊົນຊາດທີ່ອ້ອມຮອບຢູດາຍໄດ້ຮວມກຳລັງຂອງເຂົາ ເພື່ອຕຽມຕໍ່ສູ້ແລະທຳລາຍໄພ່ພົນຂອງພຣະເຈົ້າ. ເມື່ອເຢໂຮຊາຟັດຮູ້ຈັກແຜນການຂອງເຂົາ, ເພິ່ນກໍໄດ້ຮຽກເອີ້ນຄົນທັງຊາດໃຫ້ພາກັນອະທິຖານ.

ໃນຄຳອະທິຖານຂອງ ເຢໂຮຊາຟັດ ເພິ່ນ "ໄດ້ຮັບຄຳເຕືອນ" ຈາກອົງພຣະຜູ້ເປັນເຈົ້າແຫ່ງປະວັດສາດຂອງພວກເຂົາວ່າ: ພຣະອົງຂັບໄລ່ສັດຕຣູຂອງພວກເຂົາໃຫ້ໜີໄປຢ່າງໃດໃນອະດີດແລະຊົງປະທານດິນແດນໃຫ້ແກ່ອິສຣາເອນ. ເພິ່ນໄດ້ເວົ້າເຖິງຄຳສັນຍາທີ່ພຣະເຈົ້າໄດ້ໃຫ້ໄວ້ກັບໄພ່ພົນຂອງພຣະອົງ ດັ່ງນັ້ນພວກເຂົາຈຶ່ງສັນຍາກັບພຣະເຈົ້າ. ຕໍ່ຈາກນັ້ນເພິ່ນມ້ວນທ້າຍດ້ວຍຖ້ອຍຄຳງ່າຍໆ ວ່າ "ພວກເຮົາບໍ່ຮູ້ວ່າຈະເຮັດຢ່າງໃດ."

ບໍ່ມີຜູ້ໃດຢາກໄດ້ຍິນຜູ້ນຳໃຊ້ຄຳເວົ້າທີ່ເຮັດໃຫ້ໝົດກຳລັງໃຈ, ແຕ່ເຢໂຮເຊຟັດບໍ່ໄດ້ຢຸດຢູ່ຈຸດນັ້ນ. ເພິ່ນເພີ້ມເຂົ້າໄປອີກປໂຍກນຶ່ງວ່າ: "ພວກເຮົາຊອກຫາພຣະອົງ."

ບາງຄັ້ງ, ພວກເຮົາກ້າວໄປຈຸດທີ່ພວກເຮົາຍອມຮັບວ່າພວກເຮົາກຳລັງປະເຊີນໜ້າກັບບາງສິ່ງທີ່ໃຫຍ່ເກີນກວ່າຕົວເຮົາ ເຖິງຂນາດວ່າພວກເຮົາບໍ່ຮູ້ຈະເຮັດຫຍັງ. ໃນຄວາມຮູ້ສຶກຕອນນັ້ນ, ພວກເຮົາສາມາດເວົ້າວ່າ: "ພຣະເຈົ້າ, ຂ້ານ້ອຍບໍ່ມີກຳລັງພຽງພໍທີ່ຈະແກ້ໄຂບັນຫານີ້, ແລະຂ້ານ້ອຍບໍ່ຮູ້ວ່າຈະເຮັດຢ່າງໃດ ແຕ່ຂ້ານ້ອຍຊອກຫາພຣະເອົງ." ບໍ່ວ່າແມ່ນຫຍັງຈະເກີດຂຶ້ນ, ພວກເຮົາສາມາດຂອບພຣະຄຸນພຣະເຈົ້າຢູ່ສເມີ ບໍ່ແມ່ນທຸກສິ່ງຈະເກີດຜົນດີໝົດ, ແຕ່ເພາະເຫດຜົນງ່າຍໆພວກເຮົາສາມາດເອີ້ນຫາພຣະເຈົ້າ.

## 2. <u>2 ຂ່າວຄາວ 20:14-17</u>:

*14 ແລະພຣະວິນຍານຂອງພຣະຜູ້ເປັນເຈົ້າສະເດັດມາສະຖິດກັບຢາຮາຊີເອນລູກຊາຍເຊຄາຣີຢາຜູ້ເປັນລູກຊາຍເບນາຢາ ຜູ້ເປັນລູກຊາຍເຢອີເອນ ຜູ້ເປັນລູກຊາຍມັດຕານີຢາ ເປັນຄົນເລວີ ລູກຫລານຂອງອາສັບ ເມື່ອເພິ່ນຢູ່ທ່າມກາງທີ່ປະຊຸມນັ້ນ 15 ເພິ່ນໄດ້ເວົ້າວ່າ "ຢູດາທັງປວງ ແລະຊາວເຢຣູຊາເລັມທັງຫລາຍ ກັບກະສັດເຢໂຮຊາຟັດ ຂໍຈົ່ງຟັງພຣະຜູ້ເປັນເຈົ້າກ່າວດັ່ງນີ້ແກ່ທ່ານທັງຫລາຍວ່າ 'ຢ່າຢ້ານເລີຍ ແລະຢ່າທໍ້ຖອຍດ້ວຍຄົນໝູ່ໃຫຍ່ນີ້ ເພາະວ່າເສິກສົງຄາມນັ້ນບໍ່ແມ່ນຂອງທ່ານ ແຕ່ເປັນຂອງພຣະເຈົ້າ 16 ມື້ອື່ນເຊົ້ານີ້ທ່ານທັງຫລາຍຈົ່ງລົງໄປຕໍ່ສູ້ກັບພວກເຂົາ ເບິ່ງແມ ພວກເຂົາຈະຂຶ້ນມາທາງຂຶ້ນທີ່ຕາແສງຊິດ ທ່ານຈະພົບພວກເຂົາທີ່ສິ້ນສຸດຂອງພູເຂົາ ຕໍ່ໜ້າຖິ່ນແຫ້ງແລ້ງກັນດານຮູເອນ 17 ບໍ່ຈຳເປັນທີ່ທ່ານຈະຕ້ອງສູ້ຮົບໃນສົງຄາມເທື່ອນີ້ ໂອ, ຢູດາ ແລະເຢຣູຊາເລັມ ຈົ່ງເຂົ້າປະຈຳທີ່ຢືນນິດຢູ່ ແລະເບິ່ງໄຊຍະຊະນະຂອງພຣະຜູ້ເປັນເຈົ້າເພື່ອທ່ານ' ກໍຢ່າຢ້ານເລີຍ ຢ່າທໍ້ຖອຍ ມື້ອື່ນນີ້ຈົ່ງອອກໄປສູ້ກັບພວກເຂົາ ເພາະພຣະຜູ້ເປັນເຈົ້າຈະຊົງສະຖິດຢູ່ກັບທ່ານ"*

ພຣະເຈົ້າໃຫ້ກຳລັງໃຈພວກເຮົາເມື່ອພວກເຮົາຕ້ອງການ ແລະບາງເທື່ອມັນກໍມາຈາກບ່ອນທີ່ເຮົາບໍ່ຄາດຫວັງໄວ້. ມີຊາຍຄົນນຶ່ງຊື່ຢາຮາຊີເອນຢູ່ຖ້າມກາງການອະທິຖານຂອງປະຊາຊົນທີ່ອະທິຖານກັບເຢໂຮຊາຟັດ ພຣະເຈົ້າໃຊ້ລາວທັງສອງຢ່າງຄື ທ້າຊວນແລະໃຫ້ກຳລັງໃຈໄພ່ພົນຂອງພຣະອົງ:*"ຢ່າຢ້ານເລີຍ ແລະຢ່າທໍ້ຖອຍດ້ວຍຄົນໝູ່ໃຫຍ່ນີ້ ເພາະ*

*ວ່າເສິກສົງຄາມນັ້ນບໍ່ແມ່ນຂອງທ່ານ ແຕ່ເປັນຂອງພຣະເຈົ້າ."*

ເປັນຫຍັງພວກເຮົາຈຶ່ງຂອບພຣະຄຸນໃນໂລກທີ່ເປື່ອຍເຍື່ອຍນີ້? ເພາະວ່າການຕໍ່ສູ້ບໍ່ແມ່ນຂອງເຮົາ, ການຕໍ່ສູ້ນັ້ນເປັນຂອງພຣະເຈົ້າ. ຖ້າທ່ານເປັນຂອງພຣະຄຣິດ, ທ່ານກໍເປັນລູກຂອງພຣະເຈົ້າ; ດັ່ງນັ້ນ, ທຸກການໂຈມຕີທີ່ຕໍ່ສູ້ທ່ານແມ່ນການໂຈມຕີຕໍ່ສູ້ກັບພຣະອົງ.

ພວກເຮົາບໍ່ສາມາດແກ້ໄຂທຸກໆບັນຫາໄດ້ ຫຼືເຮົາບໍ່ຮູ້ສເມີໄປໃນສິ່ງທີ່ພວກເຮົາເຮັດ. ແຕ່ພວກເຮົາສາມາດເຮັດສາມຂັ້ນຕອນນີ້ ອີງຕາມຄຳເວົ້າຂອງຢາຮາຊີເອນ:

- **ຢ່າຢ້ານເລີຍ ແລະຢ່າທໍ້ຖອຍ** (ຂໍ້ 15) ທ່ານເຄີຍຮູ້ສຶກເໝືອນທ່ານຖືກໂຈມຕີຈາກທິດທາງຕ່າງໆບໍ? ໃນຊ່ວງເວລານັ້ນ, ພວກເຮົາຄວນເຮັດເໝືອນປະຊາຊົນຢູດາເຮັດ: ປະຄວາມຢ້ານໄວ້ກ່ອນ, ວາງໃຈ, ແລະລໍຖ້າການກະທຳຂອງພຣະເຈົ້າ.
- **ຈົ່ງເຂົ້າປະຈຳທີ່ແລະຢືນນິດຢູ່** ( **ຂໍ້**17 ) ໃນຂໍ້18 ພວກເຮົາເຫັນໄພ່ພົນຂອງພຣະເຈົ້າໄດ້ຢືນຢູ່ດ້ວຍເຂົ່າຂອງພວກເຂົາ! ພວກເຂົາຈະບໍ່ຫຍັບຍ້າຍຈາກຄວາມວາງໃຈໃນພຣະເຈົ້າແລະພວກເຂົາ "ກົ້ມຂາບລົງຕໍ່ພຣະພັກອົງພຣະຜູ້ເປັນເຈົ້າເພື່ອນະມັສການພຣະອົງ."
- **ເບິ່ງຊັຍຊະນະຂອງພຣະຜູ້ເປັນເຈົ້າເພື່ອທ່ານ** (**ຂໍ້** 17 ) ເມື່ອພວກເຮົາຫຼົບໜີ, ພວກເຮົາກໍພາດໂອກາດທີ່ຈະເຫັນການທຳງານຂອງພຣະເຈົ້າ. ບາງຄັ້ງພວກເຮົາຈຳເປັນຕ້ອງຢືນຢູ່ຢ່າງໝັ້ນຄົງ, ກຳຈັດຄວາມກົວແລະຄວາມທໍ້ຖອຍອອກໄປ ແລະຢືນຢູ່ໃນຄວາມເຊື່ອຂອງເຮົາຈົນກວ່າເຮົາເຫັນວ່າແມ່ນຫຍັງທີ່ພຣະເຈົ້າຈະເຮັດ.

ພຣະເຈົ້າອາດຈະໃຫ້ຄຳຕອບທັນທີຫຼືອາດຈະຢືນຢ່າງໝັ້ນຄົງຈົນໝົດຣະດູການ. ບໍ່ວ່າທາງໃດກໍຕາມ, ພຣະອົງຊົງສະຖິດຢູ່ກັບເຮົາ. ການຊົງສະຖິດຢູ່ຂອງພຣະອົງແມ່ນມີເຫດຜົນພຽງພໍທີ່ເຮົາຈະຂອບພຣະຄຸນເຖິງແມ່ນເຮົາຈະຢູ່ໃນຄວາມຍາກລຳບາກ.

## 3. <u>2 ຂ່າວຄາວ 20:20-22, 29-30</u>:

*[20]ພວກເຂົາໄດ້ລຸກຂຶ້ນແຕ່ເຊົ້າ ແລະອອກໄປໃນຖິ່ນແຫ້ງແລ້ງກັນດານແຫ່ງເຕໂກອາ ແລະເມື່ອອອກໄປ ເຢໂຮຊາຟັດປະທັບຢືນແລະກ່າວວ່າ "ໂອ ຢູດາ ແລະຊາວເຢຣູຊາເລັມເອີຍຈົ່ງຟັງຂ້າພະເຈົ້າ ຈົ່ງເຊື່ອພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະທ່ານຈະຕັ້ງໝັ້ນຄົງຢູ່ ຈົ່ງເຊື່ອບັນດາຜູ້ທຳນວາຍຂອງພຣະອົງແລະທ່ານຈະສຳເຣັດຜົນ" [21]ເມື່ອພຣະອົງໄດ້ປຶກສາກັບປະຊາຊົນແລ້ວ ພຣະອົງໄດ້ຊົງແຕ່ງຕັ້ງບັນດາຜູ້ທີ່ຈະຮ້ອງເພງຖວາຍພຣະຜູ້ເປັນເຈົ້າໃຫ້ສັນລະເສີນພຣະອົງດ້ວຍເຄື່ອງປະດັບແຫ່ງຄວາມບໍຣິສຸດ ຂະນະທີ່ພວກເຂົາຍ່າງອອກໄປຕໍ່ໜ້າສັດຕູ ແລະຮ້ອງເພງວ່າ "ຈົ່ງຖວາຍໂມທະນາແດ່ພຣະຜູ້ເປັນເຈົ້າ ເພາະຄວາມເມດຕາຂອງພຣະອົງດຳລົງຢູ່ເປັນນິດ" [22]ເມື່ອພວກເຂົາຕັ້ງຕົ້ນຮ້ອງເພງສັຣເສີນພຣະຜູ້ເປັນເຈົ້າຊົງຈັດກອງຊຸ້ມຄອຍຖ້າຕໍ່ສູ້ກັບຄົນອຳໂມນ ໂມອາບ ແລະຊາວພູເຂົາເສອີ ຜູ້ໄດ້ເຂົ້າມາຕໍ່ສູ້ກັບຢູດາດັ່ງນັ້ນ ພວກເຂົາຈຶ່ງແຕກພ່າຍໄປ [29]ຄວາມຢຳເກງພຣະເຈົ້າກໍຢູ່ເໜືອບັນດາຣາຊອານາຈັກຂອງປະເທດທັງປວງ ເມື່ອເຂົາໄດ້ຍິນວ່າພຣະຜູ້ເປັນເຈົ້າຊົງຕໍ່ສູ້ສັດຕູຂອງອິສຣາເອນ [30]ດິນແດນຂອງເຢໂຮຊາຟັດຈຶ່ງສງົບງຽບ ເພາະວ່າພຣະເຈົ້າຂອງພຣະອົງຊົງປະທານໃຫ້ພຣະອົງມີຄວາມສງົບຢູ່ຮອບດ້ານ.*

ການສູ້ຮົບໃນຕອນເຊົ້າ, ການອະທິຖານຂອງປະຊາຊົນໄດ້ປ່ຽນເປັນຄຳສັຣເສີນແລະຄຳຂອບພຣະຄຸນພຣະເຈົ້າ. ແລະຍາມໃດທີ່ເຂົາໃຫ້ການຂອບພຣະຄຸນ? ກ່ອນການສູ້ຮົບ! ເຖິງແມ່ນເຢໂຮຊາຟັດໄດ້ຮວບຮວມເອົາຄະນະນັກຮ້ອງແລະຈັດເຂົາເຈົ້າໄວ້ຕໍ່ໜ້າກອງທັບ. ການກະທຳເຊັ່ນນີ້ມີຜົນສອງຢ່າງເກີດຂຶ້ນ:

1. ທະຫານທີ່ຢູ່ພາຍໃຕ້ການບັນຊາຂອງເຢໂຮຊາຟັດໄດ້ຍິນຄຳສັຣເສີນພຣະເຈົ້ານຳໜ້າເຂົາເຈົ້າໄປ ຄຳສັຣເສີນນຳໜ້າເຂົາໄປສູ່ການສູ້ຮົບ ເພື່ອເຕືອນເຂົ້າເຈົ້າວ່າການສູ້ຮົບນີ້ເປັນຂອງພຣະເຈົ້າ.

2. ພວກສັດຕຣູໄດ້ຍິນຄຳສັຣເສີນຕໍ່ພຣະອົງຜູ້ຊົງຢືນຢູ່ກັບພວກຢູດາ.

ໃນຕອນຕົ້ນນັ້ນ, ຂ້າພະເຈົ້າໄດ້ອ້າງເຖິງພຣະທັມ1ເທຊະໂລນິກ 5:18: "ຈົ່ງຂອບພຣະຄຸນໃນທຸກສິ່ງ ເພາະວ່ານີ້ແຫລະ, ເປັນນ້ຳພຣະທັຍຂອງພຣະເຈົ້າ ຊຶ່ງປາກົດໃນພຣະເຢຊູຄຣິດສຳລັບເຈົ້າທັງຫລາຍ." ໂປໂລມີຄວາມໝັ້ນໃຈເຊັ່ນດຽວກັບເຢໂຮຊາຟັດໃນການຂອບພຣະຄຸນພຣະເຈົ້າແລະໄວ້ວາງໃຈໃນພຣະອົງ. ແມ່ນຫຍັງທີ່ເຮັດໃຫ້ຊາຍທັງສອງຄົນນີ້ມີຄວາມໝັ້ນໃຈ? ພວກເພິ່ນເຊື່ອໃນພຣະເຈົ້າແລະມີປະສົບການກັບພຣະອົງ.

ເມື່ອພວກເຮົາເຮັດຕາມຄວາມເຊື່ອຂອງເຮົາໃນພຣະຄຣິດແລະຂອບພຣະຄຸນພຣະອົງ ບໍ່ວ່າເຮົາອາດຈະເຫັນຫຍັງກໍຕາມໃນຂະນະນັ້ນ ເຮົາກໍມີປະສົບການກັບການຊົງສະຖິດຢູ່ນຳຂອງພຣະອົງ, ຣິດອຳນາດ ແລະສັນຕິສຸກ. ປະສົບການນັ້ນເຮັດໃຫ້ເຮົາມີພລັງໃນເທື່ອໜ້າທີ່ເຮົາຈະປະເຊີນກັບການຕໍ່ສູ້. "ເຄັດລັບ" ກໍຄືຊີວິດທີ່ເຕັມດ້ວຍການຂອບພຣະຄຸນແມ່ນຊີວິດທີ່ໄວ້ວາງໃນພຣະຄຣິດ.

## ນຳໃຊ້ໃນຊີວິດ.

**ທ່ານຈະດຳລົງຊີວິດຂອງທ່ານໃຫ້ເປັນຊີວິດທີ່ຂອບພຣະຄຸນພຣະເຈົ້າໃນອາທິດນີ້ຢ່າງໃດ? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້.**

- **ສັຣເສີນ.** ຈັດເວລາໄວ້ໃນແຕ່ລະວັນເພື່ອສັຣເສີນພຣະເຈົ້າທີ່ຊົງອວຍພອນໃນຊີວິດຂອງທ່ານ. ການສັຣເສີນຈະນຳໄປສູ່ການຂອບພຣະຄຸນຫລາຍຂຶ້ນໃນໃຈຂອງທ່ານ.
- **ຈົດເປັນລາຍການ.** ເປັນເຣື່ອງງ່າຍໃນການຈົດລາຍຊື່ສິ່ງດີໆທີ່ເຮົາຂອບພຣະຄຸນໄດ້; ແທນທີ່ຈະເຮັດເຊັ່ນນັ້ນຈົ່ງຈົດລາຍການສິ່ງທີ່ເຮົາຂອບພຣະຄຸນໄດ້ຍາກ. ທາງຂ້າງຂອງແຕ່ລະອັນຈົ່ງຂຽນເຖິງເຫດຜົນວ່າເປັນຫຍັງທ່ານຈຶ່ງຂອບພຣະຄຸນ.
- **ແບ່ງປັນ.** ຈົ່ງເວົ້າອອກມາເພື່ອສະແດງອອກເຖິງການຂອບພຣະຄຸນຂອງທ່ານຕໍ່ຄົນອື່ນຕລອດອາທິດນີ້. ເມື່ອເຫັນວ່າເໝາະສົມ, ຈົ່ງບອກເຖິງການຂອບພຣະຄຸນຂອງທ່ານທີ່ເຊື່ອມຕໍ່ກັບຄວາມໄວ້ວາງໃຈຂອງທ່ານໃນພຣະເຈົ້າຢ່າງໃດ.

"ຂອບພຣະຄຸນໃນທຸກສິ່ງ." ນັ້ນແມ່ນຮາກຖານທີ່ຍອມຮັບ, ເພື່ອຄວາມແນ່ໃຈ. ແຕ່ນັ້ນກໍເປັນທາງທີ່ຈົບງາມຕໍ່ການດຳເນີນຊີວິດ ແລະຈະສຳເຣັດໄດ້ໂດຍວາງໃຈໃນອົງພຣະຄຣິດໃນທຸກໆ ສິ່ງ.

**ອຸປຖັມໂດຍລາວຊາວເທີນບັບຕິດສົມພັນ www.lsbf.org ແປໂດຍ VR.**